# ການລ້ຽງງົວແມ່ຜະລິດລູກ

ເອກະສານແນະນຳ



ສູນຄົ້ນຄວ້າການລ້ຽງສັດ
ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

2025

ເອກະສານແນະນຳ

# ການລ້ຽງງົວແມ່ຜະລິດລູກ

**ຮຽບຮຽງ ໂດຍ:** ພູຄຳ ວຽງວິໄລ
ຄຳເຜັດ ພິລາວົງ
ແສດມະນີ ພົມພັກດີ

**ກວດແກ້ ໂດຍ:** ສີຕົ້ນ ກົງວົງໄຊ
ປອ. ພອນວິໄລ ສີນະວົງ

ສູນຄົ້ນຄວ້າການລ້ຽງສັດ
ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

**ກໍລະກົດ, 2025**

# ຄຳນຳ

ການລ້ຽງງົວແມ່ຜະລິດລູກ ເປັນເຕັກນິກໜຶ່ງທີ່ສຳຄັນຂອງຮູບແບບວິທີການລ້ຽງງົວ ເພາະມັນສາມາດເຮັດໃຫ້ຝູງງົວມີການເຕີບໃຫຍ່ຂະຫຍາຍໂຕ ເປັນການສ້າງລາຍຮັບເພີ່ມໃຫ້ແກ່ຊາວກະສິກອນ ສາມາດລ້ຽງເປັນອາຊີບທີ່ໝັ້ນຄົງ ແລະ ຜະລິດເປັນສິນຄ້າໄດ້. ເຕັກນິກການລ້ຽງງົວແມ່ຜະລິດລູກ ແມ່ນເຕັກນິກການລ້ຽງງົວທົ່ວໄປ ແຕ່ມີຂັ້ນຕອນທີ່ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ຄື: ການຄັດເລືອກພໍ່ແມ່ພັນ, ການວາງແຜນປະສົມພັນ, ການລ້ຽງງົວແມ່ຖືພາ ແລະ ລູກນ້ອຍ, ແລະ ການລ້ຽງງົວນ້ອຍຢ່ານົມຫາງົວລຸ້ນ (ງົວທີ່ຈະເປັນບ່າວສາວ ອາຍຸ 1-2 ປີ).

ເອກະສານແນະນຳສະບັບນີ້ ໄດ້ຮວບຮວມເອົາບັນດາເຕັກນິກທີ່ກ່ຽວຂ້ອງກັບການຈັດການເບິ່ງແຍງ ແລະ ການໃຫ້ອາຫານງົວແມ່ພັນໃນແຕ່ລະໄລຍະ ລວມເຖິງການລ້ຽງງົວນ້ອຍເກີດໃໝ່ຈົນເຖິງຢ່ານົມ. ບັນດາເຕັກນິກທີ່ກ່ຽວຂ້ອງກັບການລ້ຽງງົວອື່ນໆ ເຊັ່ນ: ການຄັດເລືອກແນວພັນ, ການປູກພືດອາຫານສັດ, ການເຮັດອາຫານເສີມ, ການເກັບຮັກສາພືດອາຫານສັດ, ການປ້ອງກັນ, ປິ່ນປົວພະຍາດສັດ ແມ່ນບໍ່ໄດ້ລວມໃນເອກະສານແນະນຳສະບັບນີ້.

ເຖິງຢ່າງໃດກໍຕາມ, ເອກະສານແນະນຳສະບັບນີ້ອາດມີຂໍ້ຂາດຕົກບົກຜ່ອງທາງດ້ານເນື້ອໃນ, ຮູບພາບປະກອບ ແລະ ເຕັກນິກບາງອັນອາດຍັງບໍ່ທັນຄົບຖ້ວນ ເຊິ່ງໃນໂອກາດນີ້ ພວກຂ້າພະເຈົ້າຂໍຄວາມຮ່ວມມືກັບທຸກພາກສ່ວນ ໃຫ້ມີການປະກອບຄຳຄິດຄຳເຫັນ, ສິ່ງຂ່າວ ເຖິງຄະນະຮັບຜິດຊອບດ້ວຍວິທີການສ້າງສັນ ເພື່ອປັບປຸງເອກະສານແນະນຳສະບັບນີ້ ໃຫ້ມີເນື້ອໃນສົມບູນຂຶ້ນຕື່ມ.

**ສູນຄົ້ນຄວ້າການລ້ຽງສັດ**
**ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ**

# ສາລະບານ

ຄຳນຳ.....i

ສາລະບານ.....ii

ບົດນຳ.....1

1. ການລ້ຽງງົວແມ່ພັນຫຼັງເກີດລູກ ຈົນເຖິງຖືພາຮອບໃໝ່ ໄລຍະ 3 ເດືອນ.....2

1.1. ການໃຫ້ອາຫານ.....2

1.2. ການປະສົມພັນ.....3

1.3. ການກວດກາການຖືພາ ແລະ ການກັບຄືນຂຶ້ນເພດ.....7

2. ການລ້ຽງງົວແມ່ຖືພາ ໄລຍະ 4 ຫາ 6 ເດືອນ.....8

2.1. ການໃຫ້ອາຫານ.....8

3. ການລ້ຽງງົວແມ່ຖືພາ ໄລຍະ 7 ເດືອນ ຫາເກີດລູກ.....8

3.1. ການໃຫ້ອາຫານ.....8

3.2. ການເກີດລູກ.....9

4. ການລ້ຽງງົວນ້ອຍເກີດໃໝ່ ຫາ ຢ່ານົມ.....11

4.1 ການໃຫ້ອາຫານເຂັ້ມຂຸ້ນເສີມແກ່ງົວນ້ອຍ.....11

4.2 ການຕອນງົວ.....12

4.3 ການຢ່ານົມ.....13

5. ການຝຶກງົວໃຫ້ມີນິໄສຄຸ້ນຄົນ.....13

ເອກະສານອ້າງອີງ.....15

# ບົດນຳ

ການລ້ຽງງົວໃຫ້ໄດ້ຮັບຜົນກຳໄລດີນັ້ນ ໃນແຕ່ລະປີຈະຕ້ອງສາມາດໃຫ້ຜົນຜະລິດງົວນ້ອຍໄດ້ເປັນຈຳນວນຫຼາຍເຊັ່ນ: ການເຮັດໃຫ້ງົວແມ່ພັນສາມາດໃຫ້ລູກເປັນປົກກະຕິປີລະໂຕ, ເຮັດໃຫ້ອັດຕາການຕາຍຂອງງົວນ້ອຍເກີດໃໝ່ ແລະ ຢ່ານົມຕ່ຳ ຫຼື ເປັນສູນ. ງົວນ້ອຍເມື່ອເຖິງອາຍຸຢ່ານົມຈະຕ້ອງມີນ້ຳໜັກສູງ, ຂະໜາດຮູບຮ່າງໃຫຍ່ ແລະ ມີຄຸນນະພາບດີ ເປັນທີ່ຕ້ອງການຂອງຕະຫຼາດ ຈຶ່ງຈະຂາຍໄດ້ລາຄາດີ. ສະນັ້ນ, ການລ້ຽງງົວຈຶ່ງຄວນຄຳນຶງເຖິງບັນດາປັດໄຈຕ່າງໆ ທີ່ກ່ຽວຂ້ອງ ດັ່ງລຸ່ມນີ້:

1. ແນວພັນທີ່ນຳມາລ້ຽງ ຕ້ອງມີຄວາມເໝາະສົມກັບລະບົບ ຫຼື ວິທີການລ້ຽງ ແລະ ຕະຫຼາດມີຄວາມຕ້ອງການສູງ.
2. ໃຫ້ອາຫານທີ່ມີຄຸນນະພາບດີ, ພຽງພໍ ແລະ ເໝາະສົມກັບຄວາມຕ້ອງການຂອງງົວໃນແຕ່ລະໄລຍະ.
3. ມີການຈັດການເບິ່ງແຍງທີ່ເໝາະສົມ.
4. ມີລະບົບປ້ອງກັນ ແລະ ຄວບຄຸມພະຍາດສັດ ຢ່າງມີປະສິດທິພາບ.

ສະນັ້ນ, ການລ້ຽງງົວເພື່ອຜະລິດງົວນ້ອຍໃຫ້ໄດ້ຫຼາຍນັ້ນ ຈຶ່ງມີຄວາມຈຳເປັນຕ້ອງເຮັດໃຫ້ງົວແມ່ພັນມີສຸຂະພາບທີ່ແຂງແຮງດີ ເນື່ອງຈາກວ່າ ສຸຂະພາບຂອງງົວແມ່ພັນແມ່ນເປັນປັດໄຈສຳຄັນຕໍ່ການຂຶ້ນເພດ ແລະ ການປະສົມພັນຕິດ ຖ້າງົວແມ່ພັນກັບຄືນມາຂຶ້ນເພດ ແລະ ສາມາດປະສົມຕິດໄດ້ໄວ (ບໍ່ເກີນ 80 ວັນ ຫຼັງຈາກເກີດລູກ) ກໍຈະເຮັດໃຫ້ງົວແມ່ພັນໃຫ້ລູກໄດ້ຢ່າງສະໝ່ຳສະເໝີປີລະໂຕ. ຖ້າຢາກໃຫ້ງົວແມ່ພັນມີສຸຂະພາບແຂງແຮງດີ ຜູ້ລ້ຽງຕ້ອງໄດ້ເອົາໃຈໃສ່ເບິ່ງແຍງລ້ຽງງົວແມ່ພັນໃນແຕ່ລະໄລຍະຢ່າງເໝາະສົມ ໂດຍສະເພາະແມ່ນການຈັດການດ້ານອາຫານຂອງງົວແມ່ພັນ ເນື່ອງຈາກວ່າ ຄວາມຕ້ອງການອາຫານຂອງງົວແມ່ໃນແຕ່ລະໄລຍະແມ່ນມີຄວາມແຕກຕ່າງກັນ. ສະນັ້ນ, ການຈັດການເບິ່ງແຍງລ້ຽງງົວແມ່ພັນ ຈຶ່ງຖືກແບ່ງ ອອກເປັນ 3 ໄລຍະ ດັ່ງນີ້:

- **ໄລຍະທີ 1:** ຫຼັງຈາກເກີດລູກ ຈົນເຖິງຖືພາຮອບໃໝ່ ໄລຍະ 3 ເດືອນ ທຳອິດ
- **ໄລຍະທີ 2:** ຖືພາ 4 – 6 ເດືອນ
- **ໄລຍະທີ 3:** ຖືພາ 7 ເດືອນ ຫາ ເກີດລູກ

ໃນໄລຍະທີ 1 ແລະ 3 ແມ່ນຕ້ອງໄດ້ເອົາໃຈໃສ່ເປັນພິເສດ, ເປັນໄລຍະທີ່ງົວແມ່ພັນມີຄວາມຕ້ອງການອາຫານທີ່ມີຄຸນນະພາບດີທີ່ສຸດ ຖ້າໃຫ້ອາຫານບໍ່ພຽງພໍ ງົວແມ່ຈະຈ່ອຍຜອມ, ມີນ້ຳນົມລ້ຽງລູກນ້ອຍບໍ່ພຽງພໍ ແລະ ຈະມີຜົນຕໍ່ສຸຂະພາບຂອງລູກນ້ອຍ ເຮັດໃຫ້ລູກນ້ອຍບໍ່ແຂງແຮງ, ຈະເລີນເຕີບໂຕຊ້າ ຫຼື ຕາຍ. ນອກຈາກນັ້ນ, ຍັງເຮັດໃຫ້ການກັບຄືນຂຶ້ນເພດຮອບໃໝ່ຂອງງົວແມ່ພັນຊ້າ ແລະ ມີອັດຕາການປະສົມພັນຕິດຕ່ຳ. ສະນັ້ນ, ການລ້ຽງງົວແມ່ພັນໃນໄລຍະນີ້ແມ່ນການຈັດການເບິ່ງແຍງບໍ່ໃຫ້ງົວແມ່ພັນຈ່ອຍຜອມຈົນເກີນໄປ ເພາະຈະສົ່ງຜົນເຮັດໃຫ້ງົວແມ່ພັນກັບຄືນຂຶ້ນເພດຊ້າ ແລະ ປະສົມພັນຕິດຍາກ ຈຶ່ງເຮັດໃຫ້ບໍ່ສາມາດໃຫ້ລູກໄດ້ປີລະໂຕ. ສະນັ້ນ, ການໃຫ້ອາຫານຈຶ່ງມີຄວາມສຳຄັນຫຼາຍທີ່ສຸດ ເພື່ອເຮັດໃຫ້ງົວແມ່ມີສຸຂະພາບແຂງແຮງສົມບູນດີ. ນອກຈາກການເອົາໃຈໃສ່ລ້ຽງງົວແມ່ພັນໃນແຕ່ລະໄລຍະທີ່ກ່າວມານັ້ນ ການເອົາໃຈໃສ່ເບິ່ງແຍງງົວນ້ອຍເກີດໃໝ່ຈົນເຖິງຢ່ານົມ ກໍມີຄວາມສຳຄັນ ແລະ ເປັນປັດໄຈໜຶ່ງທີ່ຕັດສິນເຖິງຜົນໄດ້ຮັບຈາກການລ້ຽງງົວ ເຊັ່ນດຽວກັນ.

## 1. ການລ້ຽງງົວແມ່ພັນຫຼັງເກີດລູກ ຈົນເຖິງຖືພາຮອບໃໝ່ ໄລຍະ 3 ເດືອນ

### 1.1. ການໃຫ້ອາຫານ

ຫຼັງຈາກເກີດລູກຈົນເຖິງເວລາປະສົມພັນຮອບໃໝ່ ຫາກງົວແມ່ພັນມີສຸຂະພາບສົມບູນແຂງແຮງດີ, ມີນ້ຳໜັກເພີ່ມຂຶ້ນ ຈະເຮັດໃຫ້ງົວແມ່ກັບຄືນມາຂຶ້ນເພດໄວ ແລະ ການປະສົມພັນຕິດກໍຈະດີຂຶ້ນ, ເຊິ່ງສາມາດຫຼຸດໄລຍະຫ່າງຂອງການໃຫ້ລູກລົງໄດ້. ຫຼັງຈາກເກີດລູກແລ້ວ ງົວແມ່ຈະກິນອາຫານຫຼາຍຂຶ້ນ ສະນັ້ນ, ໃນແຕ່ລະມື້ຈຶ່ງຕ້ອງໄດ້ມີການກະກຽມອາຫານຫຍາບ (ຫຍ້າອ່ອນ) ໃຫ້ພຽງພໍ ເພື່ອໃຫ້ງົວແມ່ໄດ້ກິນຢ່າງເຕັມທີ່ ປະມານ 10 ຫາ 15 ເປີເຊັນ ຂອງນ້ຳໜັກໂຕ ແລະ ຄວນໃຫ້ອາຫານເຂັ້ມຂຸ້ນ ຫຼື ອາຫານປະສົມ ທີ່ມີທາດຊີ້ນລວມ 15 ຫາ 16 ເປີເຊັນ ເປັນອາຫານເສີມ ປະມານ 1 ຫາ 2 ກິໂລ ຕໍ່ມື້. ແນວໃດກໍຕາມ, ການໃຫ້ອາຫານເຂັ້ມຂຸ້ນເປັນອາຫານເສີມ ຍັງຈະຕ້ອງໄດ້ສັງເກດເບິ່ງສະພາບຂອງງົວແມ່ພັນຕື່ມອີກ ຖ້າຫາກງົວແມ່ພັນມີສຸຂະພາບແຂງແຮງສົມບູນ ແລະ ຕຸ້ຍພີດີ ກໍບໍ່ຈຳເປັນຕ້ອງໃຫ້ອາຫານເສີມຕື່ມອີກ ເພາະຈະເປັນການປະຢັດຄ່າໃຊ້ຈ່າຍລົງໄດ້.



ຮູບ 1. ການໃຫ້ອາຫານງົວແມ່ລ້ຽງລູກ

ອາຫານເຂັ້ມຂຸ້ນສາມາດນຳໃຊ້ວັດຖຸດິບອາຫານສັດທີ່ຫາໄດ້ໃນທ້ອງຖິ່ນຂອງຕົນ ແລະ ມີລາຄາບໍ່ແພງ ເພື່ອນຳມາປະກອບເປັນອາຫານປະສົມ ເຊັ່ນ: ຫົວມັນຕົ້ນແຫ້ງ, ໃບມັນຕົ້ນແຫ້ງ, ຂີ້ເບຍ, ສາລີບົດ, ຮຳ, ກາກຖົ່ວເຫຼືອງ ແລະ ອື່ນໆ.

ໃນກໍລະນີຜູ້ລ້ຽງບໍ່ສາມາດຫາຫຍ້າສົດໄດ້ພຽງພໍຕາມຄວາມຕ້ອງການຂອງງົວແມ່ພັນໃນແຕ່ລະວັນ ໂດຍສະເພາະໃນຊ່ວງລະດູແລ້ງ ແມ່ນສາມາດນຳໃຊ້ສິ່ງເສດເຫຼືອຈາກການຜະລິດກະສິກຳມາເປັນອາຫານລ້ຽງງົວແມ່ພັນໄດ້ ເຊັ່ນ: ຕົ້ນສາລີ, ເຟືອງ ແລະ ອື່ນໆ ແຕ່ຈຳເປັນຕ້ອງໄດ້ເສີມອາຫານເຂັ້ມຂຸ້ນໃຫ້ຫຼາຍຂຶ້ນ ເພື່ອໃຫ້ງົວແມ່ພັນໄດ້ຮັບອາຫານພຽງພໍຕາມຄວາມຕ້ອງການ ທັງໃນດ້ານປະລິມານ ແລະ ຄຸນນະພາບ.

**ຕາຕະລາງ 1.** ຕົວຢ່າງການໃຫ້ອາຫານງົວແມ່ພັນພື້ນເມືອງ ໃນໄລຍະຫຼັງເກີດລູກ (ນ້ຳໜັກ 200 ກລ)

| ລ/ດ | ລາຍການ | ລະດູຝົນ (ກລ) | ລະດູແລ້ງ (ກລ) | ລະດູແລ້ງ (ກລ) |
|---|---|---|---|---|
| 1 | ຫຍ້າສົດ | 25 | - | - |
| 2 | ຫຍ້າໝັກ | - | 25 | - |
| 3 | ເຟືອງແຫ້ງ | - | - | 6 |
| 4 | ອາຫານເຂັ້ມຂຸ້ນ | 0.5 | 0.5 | 2.5 - 3 |

**ຕາຕະລາງ 2.** ຕົວຢ່າງການໃຫ້ອາຫານງົວແມ່ພັນລູກປະສົມ ໃນໄລຍະຫຼັງເກີດລູກ (ນ້ຳໜັກ 300 ກລ)

| ລ/ດ | ລາຍການ | ລະດູຝົນ (ກລ) | ລະດູແລ້ງ (ກລ) | ລະດູແລ້ງ (ກລ) |
|---|---|---|---|---|
| 1 | ຫຍ້າສົດ | 36 | - | - |
| 2 | ຫຍ້າໝັກ | - | 36 | - |
| 3 | ເຟືອງແຫ້ງ | - | - | 9 |
| 4 | ອາຫານເຂັ້ມຂຸ້ນ | 0.5 | 0.5 | 3 |

**ໝາຍເຫດ:** ອາຫານເຂັ້ມຂຸ້ນ ມີທາດຊີ້ນລວມ ປະມານ 15 – 16 ເປີເຊັນ.

ນອກຈາກ ການໃຫ້ອາຫານຫຍາບ ແລະ ອາຫານເຂັ້ມຂຸ້ນແກ່ງົວແມ່ໃຫ້ພຽງພໍທັງໃນດ້ານປະລິມານ ແລະ ຄຸນນະພາບແລ້ວ ຍັງຕ້ອງໃຫ້ງົວແມ່ໄດ້ຮັບວິຕາມິນ ແລະ ແຮ່ທາດຢ່າງພຽງພໍ, ເຊິ່ງຈະຊ່ວຍໃຫ້ງົວແມ່ກັບຄືນມາຂຶ້ນເພດໄວຂຶ້ນ ແລະ ຈະເຮັດໃຫ້ຮອບວຽນການຂຶ້ນເພດຂອງງົວແມ່ເປັນປົກກະຕິ. ສະນັ້ນ, ຜູ້ລ້ຽງຄວນມີການໃຫ້ວິຕາມິນ A, D, E, K ແກ່ງົວແມ່ຫຼັງຈາກເກີດລູກ ໂດຍວິທີການສັກ ຫຼື ປະສົມອາຫານໃຫ້ກິນ ແລະ ຄວນມີກ້ອນແຮ່ທາດຫ້ອຍປະໄວ້ໃນຄອກໃຫ້ງົວແມ່ໄດ້ເລຍກິນຕາມໃຈ, ເຊິ່ງສາມາດຫາຊື້ໄດ້ໃນຮ້ານຂາຍຢາສຳລັບສັດ ແລະ ຮ້ານຂາຍອາຫານສັດທົ່ວໄປ.



ຮູບ 2. ການຫ້ອຍກ້ອນແຮ່ທາດໄວ້ໃຫ້ງົວແມ່ເລຍກິນຕາມໃຈ

**ແຫຼ່ງທີ່ມາ:** https://www.shutterstock.com/image-photo/mineral-530844337

## 1.2. ການປະສົມພັນ

ໂດຍທົ່ວໄປ ງົວແມ່ຈະກັບຄືນມາຂຶ້ນເພດອີກເທື່ອໃໝ່ ປະມານ 30 – 50 ວັນ ຫຼັງຈາກເກີດລູກ ແຕ່ຄວນໃຫ້ປະສົມພັນຫຼັງຈາກ 60 ວັນ ຂຶ້ນໄປ (ການກັບຄືນຂຶ້ນເພດໃນຮອບທີສອງ) ເພາະວ່າ ຖ້າງົວແມ່ພັນໄດ້ຮັບການປະສົມພັນໄວເກີນໄປ (ໄລຍະ 40 ວັນ ຫຼັງຈາກເກີດລູກ) ອາດເຮັດໃຫ້ອະໄວຍະວະຂອງລະບົບສືບພັນຂອງງົວແມ່ມີການຕິດເຊື້ອແບັກທີເຣຍ. ເຖິງຢ່າງໃດກໍຕາມ ເພື່ອເຮັດໃຫ້ງົວແມ່ພັນໃຫ້ລູກເປັນປົກກະຕິປີລະໂຕນັ້ນ ແມ່ນຄວນປະສົມພັນບໍ່ເກີນໄລຍະ 80 ວັນ ຫຼັງຈາກເກີດລູກ. ແຕ່ຖ້າຫາກວ່າ ງົວແມ່ກັບຄືນຂຶ້ນເພດຮອບໃໝ່ຊ້າກວ່າ 80 ວັນ ຫຼື ບໍ່ທັນມີປະກົດການຂຶ້ນເພດ ສັດອາດມີບັນຫາ.

ງົວແມ່ພັນຈະປະສົມພັນຕິດ (ຖືພາ) ຕ້ອງແມ່ນຢູ່ໃນໄລຍະຂອງການຂຶ້ນເພດ ແລະ ພ້ອມໃຫ້ປະສົມພັນ, ເຊິ່ງໄລຍະເວລາໃນການຂຶ້ນເພດຂອງງົວແມ່ຈະໃຊ້ເວລາ ປະມານ 24 ຫາ 36 ຊົ່ວໂມງ ແຕ່ໄລຍະທີ່ເໝາະສົມໃນການປະສົມພັນແມ່ນຢູ່ໃນລະຫວ່າງ ຊົ່ວໂມງທີ 12 ຫາ 24 ແລະ ຊົ່ວໂມງທີ່ມີຄວາມເໝາະສົມໃນການປະສົມພັນຫຼາຍທີ່ສຸດ ແມ່ນຢູ່ໃນຊົ່ວໂມງທີ 18 ຂອງໄລຍະການຂຶ້ນເພດຂອງງົວແມ່, ເຊິ່ງປະກົດການຂອງງົວແມ່ທີ່ສະແດງອາການຂຶ້ນເພດ ໄດ້ແບ່ງອອກເປັນ 3 ໄລຍະ ດັ່ງລຸ່ມນີ້:

| ໄລຍະກ່ອນການຂຶ້ນເຜດ (Proestrus) | ໄລຍະຂຶ້ນເຜດ (Estrus) | ໄລຍະຫຼັງການຂຶ້ນເຜດ (Metestrus) |
|---|---|---|
| 6 – 12 ຊົ່ວໂມງ | 18 ຊົ່ວໂມງ | 10 ຊົ່ວໂມງ |
|  |  |  |

| ຊົ່ວໂມງທີ | 0 | 6 | 12 | 18 | 24 | 28 | 36 |
|---|---|---|---|---|---|---|---|
| ໄລຍະເວລາປະສົມພັນ | ໄວເກີນໄປ | ປະສົມໄດ້ | ເວລາທີ່ເໝາະສົມ | | ປະສົມໄດ້ | ຊ້າເກີນໄປ | |

| | | |
|---|---|---|
| - ງົວແມ່ມັກເຂົ້າໃກ້ໂຕອື່ນ.<br>- ກິນອາຫານໜ້ອຍລົງ, ແລ່ນ ຫຼື ກະໂດດເຕັ້ນ ແລະ ຮ້ອງສຽງດັງ.<br>- ອະໄວຍະເພດເລີ່ມໃຄ່ບວມ ແລະ ເປັນສີຊົມພູ, ບາງຄັ້ງມີນ້ຳເມືອກໃສ<br>- ໄລຍະນີ້ປາກມົດລູກບໍ່ທັນເປີດ ສັດບໍ່ທັນພ້ອມໃນການປະສົມພັນ. | - ງົວແມ່ມັກຈະສົ່ງສຽງຮ້ອງ, ຢ່ຽວຢັດ, ກິນອາຫານໜ້ອຍລົງ.<br>- ນ້ຳນົມຫຼຸດລົງ, ມີອາການຕື່ນຕົກໃຈ<br>- ມ່ານຕາດຳຂະຫຍາຍກວ້າງອອກ.<br>- ເນື້ອເຍື່ອປາກຊ່ອງຄອດເປັນສີຊົມພູ, ມີນ້ຳເມືອກໃສ ແລະ ໜຽວ ອາດເປັນສາຍບໍ່ຂາດອອກຈາກກັນ.<br>- ໄລຍະນີ້ປາກມົດລູກເປີດ, ງົວແມ່ຈະຢືນຊື່ງ ແລະ ຍອມໃຫ້ໂຕອື່ນຂຶ້ນໂຄມ ຫຼື ຂຶ້ນໂຄມໂຕອື່ນ<br>- ເປັນຊ່ວງເໝາະສົມໃນການປະສົມພັນ ແລະ ມີໂອກາດທີ່ຈະປະສົມພັນຕິດຫຼາຍທີ່ສຸດ. | - ນ້ຳເມືອກທີ່ເກີດຂຶ້ນຢູ່ຊ່ອງຄອດນັ້ນ ມີໜ້ອຍລົງ, ປາກມົດລູກປິດ.<br>- ອາການຕ່າງໆອ່ອນລົງ ແລະ ໝົດໄປ.<br>- ກິນອາຫານປົກກະຕິ.<br>- ເນື້ອເຍື່ອປາກຊ່ອງຄອດບໍ່ແດງ.<br>- ມີນ້ຳເມືອກໜຽວ, ບໍ່ໃສ ແລະ ໜ້ອຍ ຫຼື ໝົດໄປ |

### 1.2.1. ວິທີການປະສົມພັນ

ການປະສົມພັນງົວ ແບ່ງອອກເປັນ 3 ວິທີ ຄື:

1. ການປ່ອຍໃຫ້ງົວພໍ່ພັນຄຸມຝູງງົວແມ່.
2. ການຈູງເຂົ້າປະສົມພັນກັນ.
3. ການປະສົມພັນທຽມ.

ການປະສົມພັນງົວໃນແຕ່ລະວິທີ ແມ່ນມີຈຸດດີ ແລະ ຈຸດອ່ອນ ແຕກຕ່າງກັນໄປ ດັ່ງລາຍລະອຽດລຸ່ມນີ້:

| ວິທີການປະສົມພັນ | ຈຸດດີ | ຈຸດອ່ອນ |
|---|---|---|
| **ການປ່ອຍໃຫ້ພໍ່ພັນຄຸມຝູງ:** ເປັນວິທີການປະສົມພັນແບບທຳມະຊາດ ໂດຍປ່ອຍໃຫ້ງົວພໍ່ພັນຄຸມຝູງງົວແມ່ຕະລອດປີຢູ່ໃນ | - ຜູ້ລ້ຽງບໍ່ໄດ້ເສຍເວລາຕິດຕາມການຂຶ້ນເຜດຂອງງົວແມ່, ເຊິ່ງງົວພໍ່ພັນຈະຮັບຮູ້ ແລະ ປະສົມກັບງົວແມ່ພັນເອງ. | - ສິ້ນເປືອງຄ່າໃຊ້ຈ່າຍໃນການຊື້ ແລະ ລ້ຽງງົວພໍ່ພັນ.<br>- ພໍ່ພັນຈະໄລ່ຕາມງົວແມ່ທີ່ຂຶ້ນເຜດຈົນບໍ່ສົນໃຈກິນອາຫານ, ຖ້າຢູ່ໃນ |

| ວິທີການປະສົມພັນ | ຈຸດດີ | ຈຸດອ່ອນ |
|---|---|---|
| ທົ່ງຫຍ້າ, ເຊິ່ງງົວພໍ່ພັນ 1 ໂຕ ສາມາດຄຸມຝູງງົວແມ່ພັນໄດ້ ດັ່ງນີ້:<br>- ງົວພໍ່ພັນ ອາຍຸ 2 ຫາ 2.5 ປີ ຄວນໃຊ້ຄຸມຝູງງົວແມ່ພັນ ປະມານ 12 ຫາ 25 ແມ່.<br>- ງົວພໍ່ພັນ ອາຍຸ 3 ປີ ຂຶ້ນໄປ ຄວນໃຊ້ຄຸມຝູງງົວແມ່ພັນ ປະມານ 20 ຫາ 30 ແມ່. | - ບໍ່ສິ້ນເປືອງຄ່າໃຊ້ຈ່າຍໃນການຊື້ ແລະ ເກັບຮັກສານ້ຳເຊື້ອແຊ່ແຂງງົວ.<br>- ບໍ່ສິ້ນເປືອງຄ່າໃຊ້ຈ່າຍໃນການຈ້າງນັກປະສົມພັນທຽມ ຫຼື ຝຶກອົບຮົມນັກປະສົມພັນທຽມຂອງຟາມເອງ. | ຝູງ ຫາກມີງົວແມ່ຂຶ້ນເພດໃນເວລາໃກ້ຄຽງກັນຫຼາຍໂຕ ອາດຈະເຮັດໃຫ້ງົວພໍ່ພັນມີຮ່າງກາຍຊຸດໂຊມລົງ.<br>- ຖ້າມີງົວແມ່ພັນຢູ່ໃນຝູງໂຕໃດໜຶ່ງເປັນພະຍາດທາງລະບົບສືບພັນ ເຊັ່ນ: ພະຍາດແທ້ງຕິດຕໍ່ ອາດຈະເຮັດໃຫ້ສາມາດຕິດຕໍ່ໃສ່ງົວແມ່ພັນໂຕອື່ນໆໄດ້ ຈາກການປະສົມພັນ. |
| **ການຈູງເຂົ້າປະສົມພັນກັນ:**<br>ເປັນການປະສົມພັນໂດຍຈູງງົວພໍ່ພັນມາປະສົມກັບງົວແມ່ພັນ ຫຼື ຈູງງົວແມ່ພັນມາປະສົມກັບງົວພໍ່ພັນ. ການປະສົມພັນດ້ວຍວິທີການນີ້ ຄວນແຍກງົວພໍ່ພັນອອກລ້ຽງຕ່າງຫາກ ບໍ່ໃຫ້ປະປົນກັບຝູງງົວແມ່ພັນ. | - ບໍ່ສິ້ນເປືອງຄ່າໃຊ້ຈ່າຍໃນການຊື້ ແລະ ເກັບຮັກສານ້ຳເຊື້ອແຊ່ແຂງງົວ.<br>- ບໍ່ສິ້ນເປືອງຄ່າໃຊ້ຈ່າຍໃນການຈ້າງນັກປະສົມພັນທຽມ ຫຼື ຝຶກອົບຮົມນັກປະສົມພັນທຽມຂອງຟາມເອງ.<br>- ງົວພໍ່ພັນມີສຸຂະພາບແຂງແຮງດີ ແລະ ສາມາດປະສົມພັນກັບງົວແມ່ໄດ້ຈຳນວນຫຼາຍກວ່າວິທີການໃຊ້ພໍ່ພັນຄຸມຝູງ ປະມານ 5 ຄັ້ງ ຕໍ່ອາທິດ ຫາກມີການເບິ່ງແຍງທີ່ດີ. | - ຕ້ອງໄດ້ໃຊ້ແຮງງານ ແລະ ມີເວລາໃນການຕິດຕາມງົວແມ່ຂຶ້ນເພດຈຶ່ງຈະໄດ້ຮັບຜົນດີ.<br>- ສິ້ນເປືອງຄ່າໃຊ້ຈ່າຍໃນການຊື້ ແລະ ລ້ຽງງົວພໍ່ພັນ.<br>- ຖ້າມີງົວແມ່ພັນຢູ່ໃນຝູງໂຕໃດໜຶ່ງເປັນພະຍາດທາງລະບົບສືບພັນ ເຊັ່ນ: ພະຍາດແທ້ງຕິດຕໍ່ ອາດຈະເຮັດໃຫ້ສາມາດຕິດຕໍ່ໃສ່ງົວແມ່ພັນໂຕອື່ນໆໄດ້ ຈາກການປະສົມພັນ. |
| **ການປະສົມພັນທຽມ:**<br>ເປັນວິທີການທີ່ນຳເອົານ້ຳເຊື້ອແຊ່ແຂງຂອງງົວພໍ່ພັນມາປະສົມກັບງົວແມ່ທີ່ສະແດງອາການຂຶ້ນເພດ ເຊິ່ງນັກປະສົມພັນທຽມຈະສອດຫຼອດນ້ຳເຊື້ອເຂົ້າໄປໃນອະໄວຍະວະເພດຂອງງົວແມ່, ຜ່ານຄໍມົດລູກ ແລະ ເຂົ້າໄປສີດນ້ຳເຊື້ອໃນມົດລູກຂອງງົວແມ່. | - ບໍ່ສິ້ນເປືອງຄ່າໃຊ້ຈ່າຍໃນການຊື້ ແລະ ລ້ຽງງົວພໍ່ພັນ.<br>- ສາມາດເກັບສະຖິຕິໃນການປະສົມພັນ ແລະ ຮູ້ກຳນົດວັນເກີດລູກຂ້ອນຂ້າງແນ່ນອນ.<br>- ສາມາດນຳໃຊ້ນ້ຳເຊື້ອພັນດີຈາກບ່ອນຕ່າງໆ ໄດ້ສະດວກ ເຮັດໃຫ້ຄວາມກ້າວໜ້າໃນການປັບປຸງພັນໄວຂຶ້ນ.<br>- ຖ້າໃຊ້ຄວບຄູ່ກັບຮໍໂມນກະຕຸ້ນການຂຶ້ນເພດຂອງງົວແມ່ ຈະເຮັດ | - ຕ້ອງໄດ້ໃຊ້ແຮງງານ ແລະ ມີເວລາໃນການຕິດຕາມງົວແມ່ຂຶ້ນເພດຈຶ່ງຈະໄດ້ຮັບຜົນດີ.<br>- ຕ້ອງມີຄອກ ແລະ ອຸປະກອນໃນການປະສົມພັນທຽມ.<br>- ເສຍເວລາໃນການໄລ່ແຍກແມ່ງົວໄປເຂົ້າຄອກປະສົມພັນໃນຂະນະທີ່ມີລູກນ້ອຍຢູ່ນຳແມ່.<br>- ເສຍຄ່າໃຊ້ຈ່າຍໃນການຈ້າງນັກປະສົມພັນທຽມ ຫຼື ຝຶກອົບຮົມ |

| ວິທີການປະສົມພັນ | ຈຸດດີ | ຈຸດອ່ອນ |
|---|---|---|
| | ໃຫ້ການຈັດການກ່ຽວກັບການປະສົມພັນສະດວກຂຶ້ນ. | ນັກປະສົມພັນທຽມຂອງຟາມເອງ.<br>- ອັດຕາການປະສົມພັນຕິດແມ່ນຂຶ້ນຢູ່ກັບຄວາມສາມາດໃນການຕິດຕາມການຂຶ້ນເພດຂອງງົວແມ່ ແລະ ຄວາມຊຳນານຂອງນັກປະສົມພັນ.<br>- ເສຍຄ່າໃຊ້ຈ່າຍໃນການຊື້ ແລະ ເກັບຮັກສານ້ຳເຊື້ອງົວແຊ່ແຂງ. |

### 1.2.2. ບາງຂໍ້ແນະນຳ ກ່ຽວກັບ ເຕັກນິກການປະສົມພັນທຽມງົວ ໃຫ້ໄດ້ຮັບຜົນດີ

- ຄວນແຍກງົວແມ່ທີ່ສະແດງອາການຂຶ້ນເພດອອກຈາກຝູງ ຢ່າງໜ້ອຍ 3 ຊົ່ວໂມງ ກ່ອນເຮັດການປະສົມພັນທຽມ ເພື່ອປ້ອງກັນບໍ່ໃຫ້ງົວຜູ້ໂຕອື່ນຂຶ້ນປະສົມພັນກ່ອນ.
- ໃນລະຫວ່າງການປະສົມພັນທຽມ ຄວນໃຫ້ງົວແມ່ມີອາການສະຫງົບ, ບໍ່ຢ້ານ ແລະ ດີ້ນກະວົນກະວາຍ ການນຳສັດເຂົ້າຄອກປະສົມພັນກ່ອນລ່ວງໜ້າ ແລະ ໃຫ້ງົວແມ່ໄດ້ກິນອາຫານຢູ່ໃນຄອກປະສົມພັນ ຫຼື ໃຫ້ລູກນ້ອຍມາຢູ່ນຳ (ຖ້າມີລູກນ້ອຍ) ຈະຊ່ວຍໃຫ້ງົວແມ່ມີອາການສະຫງົບດີ.
- ງົວແມ່ທີ່ປະສົມພັນທຽມແລ້ວຄວນຂັງໄວ້ໃນຄອກ ຫຼື ບ່ອນທີ່ມີຮົ່ມ ຈະເຮັດໃຫ້ມີໂອກາດປະສົມພັນຕິດດີຂຶ້ນ ເນື່ອງຈາກວ່າ ຖ້າງົວແມ່ອອກໄປຕາກແດດຈະເຮັດໃຫ້ອຸນຫະພູມຂອງຮ່າງກາຍສູງຂຶ້ນ ແລະ ໂອກາດປະສົມພັນຕິດກໍຈະຫຼຸດລົງ.

ໃນກໍລະນີ ເຈົ້າຂອງງົວບໍ່ສາມາດຕິດຕາມ ຫຼື ບໍ່ຮູ້ເວລາທີ່ງົວແມ່ສະແດງອາການຂຶ້ນເພດໄດ້ຢ່າງແນ່ນອນນັ້ນ ແມ່ນສາມາດເຮັດການປະສົມພັນທຽມງົວ ໄດ້ດັ່ງນີ້:

| ເວລາທີ່ເຫັນງົວແມ່ຖືເຊີງ | ເວລາທີ່ຄວນປະສົມພັນ | ການປະສົມຊ້ຳເທື່ອໄປ |
|---|---|---|
| ພົບເຫັນງົວແມ່ສະແດງອາການຂຶ້ນເພດໃນຕອນເຊົ້າ | ໃຫ້ປະສົມພັນງົວໃນຕອນບ່າຍຂອງວັນດຽວກັນ ປະມານ 3 – 4 ໂມງແລງ | ຖ້າຫາກປະສົມພັນໃນຕອນເຊົ້າຂອງມື້ຖັດໄປ |
| ພົບເຫັນງົວແມ່ສະແດງອາການຂຶ້ນເພດໃນຕອນບ່າຍ ຫຼື ຕອນແລງ | ໃຫ້ປະສົມພັນງົວໃນຕອນເຊົ້າຂອງມື້ຖັດໄປ ປະມານ 7 – 8 ໂມງເຊົ້າ | ຖ້າຫາກປະສົມພັນໃນຕອນບ່າຍຂອງມື້ຖັດໄປ |
| ພົບເຫັນງົວແມ່ສະແດງອາການຂຶ້ນເພດໃນຕອນແລງ | ໃຫ້ປະສົມພັນງົວກ່ອນທ່ຽງຂອງມື້ຖັດໄປ | ຖ້າຫາກປະສົມພັນໃນຕອນບ່າຍຂອງມື້ຖັດໄປ |

### 1.3. ການກວດກາການຖືພາ ແລະ ການກັບຄືນຂຶ້ນເພດ




ຮູບ 3. ຮອບວຽນການຂຶ້ນເພດຂອງງົວແມ່ພັນ ໂດຍສະເລ່ຍ 21 ວັນ (18 ຫາ 24 ວັນ)

ຮອບວຽນການຂຶ້ນເພດຂອງງົວ ສະເລ່ຍ 21 ວັນ (18 ຫາ 24 ວັນ). ສະນັ້ນ ຜູ້ລ້ຽງຄວນຈົດບັນທຶກວັນທີປະສົມພັນ ແລ້ວນັບໄປອີກປະມານ 18 ຫາ 24 ວັນ ຕໍ່ໄປ ຕ້ອງສັງເກດເບິ່ງວ່າ ງົວແມ່ສະແດງອາການຂຶ້ນເພດຫຼືບໍ່ ຫາກງົວແມ່ສະແດງອາການຂຶ້ນເພດອີກສະແດງວ່າປະສົມພັນບໍ່ຕິດ ຕ້ອງໄດ້ປະສົມພັນຄືນໃໝ່. ແຕ່ຖ້າຫາກງົວແມ່ບໍ່ສະແດງອາການຂຶ້ນເພດນັ້ນສະແດງວ່າປະສົມພັນຕິດແລ້ວ. ແຕ່ເພື່ອໃຫ້ເກີດຄວາມໝັ້ນໃຈຫຼາຍຂຶ້ນ ຕ້ອງໄດ້ຕິດຕາມໄປອີກ ທຸກໆ 21 ວັນ ຫຼື ເພື່ອໃຫ້ມີຄວາມໝັ້ນໃຈວ່າງົວແມ່ຖືພາແລ້ວຫຼືຍັງ ແມ່ນສາມາດກວດເບິ່ງໄດ້ໂດຍໃຫ້ຜູ້ທີ່ມີຄວາມຊໍານານ ແລະ ມີປະສົບການໃຊ້ມືຈົກຜ່ານຮູທະວານໜັກ ເພື່ອຄໍາເບິ່ງມົດລູກ ແລະ ຮັງໄຂ່ ເມື່ອງົວແມ່ຖືພາໄດ້ 2 ຫາ 3 ເດືອນ ຂຶ້ນໄປ. ຫຼັງຈາກງົວແມ່ພັນໄດ້ຮັບການປະສົມພັນຕິດແລ້ວ ຈະໃຊ້ເວລາໃນການຖືພາ (ນັບຕັ້ງແຕ່ມື້ປະສົມພັນຈົນເຖິງເກີດລູກ) ສະເລ່ຍ 282 ວັນ (ປະມານ 274 ຫາ 291 ວັນ).

ງົວແມ່ພັນທີ່ປະສົມພັນໂດຍການປະສົມພັນທຽມແລ້ວຕິດຍາກ ຫຼື ປະສົມພັນບໍ່ຕິດເຖິງ 3 ຄັ້ງ ຄັ້ງຕໍ່ໆໄປຄວນປະສົມພັນໂດຍໃຊ້ພໍ່ພັນຄຸມຝູງ ຫຼື ໃຊ້ວິທີຈູງເຂົ້າປະສົມພັນ. ຖ້າຫາກປະສົມພັນຫຼາຍຄັ້ງແລ້ວຍັງບໍ່ຕິດອີກຄວນພິຈາລະນາຂາຍອອກ.



ຮູບ 4. ກວດກາການຖືພາຂອງງົວແມ່

## 2. ການລ້ຽງງົວແມ່ຖືພາ ໄລຍະ 4 ຫາ 6 ເດືອນ

ການລ້ຽງງົວແມ່ຖືພາ ໄລຍະ 4 ຫາ 6 ເດືອນ ເປັນໄລຍະທີ່ລູກນ້ອຍມີການຈະເລີນເຕີບແລ້ວ ແລະ ກຽມຢ່ານົມ, ຖ້າຫາກງົວນ້ອຍກິນຫຍ້າ ແລະ ອາຫານໄດ້ຫຼາຍຂຶ້ນແລ້ວ ງົວແມ່ກໍຕ້ອງການອາຫານເພື່ອນໍາໃຊ້ບໍາລຸງລ້ຽງຮ່າງກາຍເທົ່ານັ້ນ (ບໍ່ຜະລິດນໍ້ານົມ) ໃນຊ່ວງນີ້, ລູກທີ່ຢູ່ໃນທ້ອງກໍຍັງນ້ອຍ ງົວແມ່ຈຶ່ງຕ້ອງການອາຫານໜ້ອຍກວ່າໄລຍະອື່ນໆ ແລະ ອາດໃຊ້ອາຫານທີ່ມີຄຸນະພາບຕໍ່າແດ່ກໍໄດ້ ເພື່ອເປັນການປະຢັດລາຍຈ່າຍລົງ, ຖ້າວ່າເຮົາໃຫ້ອາຫານທີ່ມີຄຸນະພາບດີ ງົວແມ່ຈະກິນຫຼາຍ ອາດເຮັດໃຫ້ງົວແມ່ຕຸ້ຍເກີນໄປຈະບໍ່ດີ ແຕ່ກໍບໍ່ຄວນໃຫ້ງົວແມ່ຈ່ອຍເກີນໄປ.

### 2.1. ການໃຫ້ອາຫານ

ການໃຫ້ອາຫານງົວແມ່ຖືພາ ໄລຍະ 4 ຫາ 6 ເດືອນ ໃນຊ່ວງລະດູຝົນແມ່ນງົວຈະກິນຫຍ້າສົດເປັນອາຫານຫຼັກ ແລະ ອາດຈະໃຫ້ອາຫານເຂັ້ມຂຸ້ນເສີມເລັກນ້ອຍຕາມສະພາບຂອງງົວແມ່, ໃນຊ່ວງລະດູແລ້ງໃຫ້ຫຍ້າໝັກ, ຫຍ້າແຫ້ງ ຫຼື ເຟືອງແຫ້ງ ເປັນອາຫານຫຼັກ ແລະ ຄວນໃຫ້ອາຫານເຂັ້ມຂຸ້ນສູງຂຶ້ນ ປະມານ 1 ຫາ 2 ກິໂລ ເພື່ອບໍ່ໃຫ້ງົວແມ່ຈ່ອຍ.

## 3. ການລ້ຽງງົວແມ່ຖືພາ ໄລຍະ 7 ເດືອນ ຫາເກີດລູກ

ເປັນໄລຍະທີ່ສໍາຄັນອີກໄລຍະໜຶ່ງທີ່ຈະຕ້ອງເອົາໃຈໃສ່ ເພາະເປັນໄລຍະທີ່ລູກອ່ອນໃນທ້ອງມີການຈະເລີນເຕີບໂຕ ປະມານ 70 ຫາ 80% ແລະ ເປັນໄລຍະທີ່ງົວແມ່ພັນກຽມຜະລິດນໍ້ານົມ ຖ້າໃຫ້ອາຫານທີ່ບໍ່ມີຄຸນະພາບດີ ຫຼື ບໍ່ພຽງພໍ ຈະເຮັດໃຫ້ງົວແມ່ພັນສູນເສຍນໍ້າໜັກ ອາດຈະເຮັດໃຫ້ການກັບມາຂຶ້ນເພດຄັ້ງໃໝ່ຫຼັງເກີດລູກຊ້າ ຈະມີຜົນກະທົບຕໍ່ສະມັດຕະພາບການຜະລິດລູກຂອງງົວແມ່ພັນ ຫຼື ບໍ່ສາມາດໃຫ້ລູກໄດ້ປີລະໂຕ. ດັ່ງນັ້ນ, ໃນໄລຍະນີ້ຄວນໃຫ້ງົວແມ່ມີນໍ້າໜັກເພີ່ມຂຶ້ນ ເພື່ອຊົດເຊີຍນໍ້າໜັກທີ່ຈະສູນເສຍໄປຫຼັງຈາກເກີດລູກ ໂດຍສະເພາະແມ່ນງົວແມ່ສາວເປັນສິ່ງທີ່ຈໍາເປັນຫຼາຍ.

### 3.1. ການໃຫ້ອາຫານ

ງົວແມ່ໃກ້ຈະເກີດລູກຈະກິນອາຫານໄດ້ໜ້ອຍກວ່າເວລາບໍ່ຖືພາ ປະມານ 12 ຫາ 13% ແຕ່ການກິນອາຫານຈະເພີ່ມຂຶ້ນຢ່າງໄວວາຫຼັງຈາກເກີດລູກ. ດັ່ງນັ້ນ, ໃນໄລຍະນີ້ຈຶ່ງຈໍາເປັນຕ້ອງໃຫ້ອາຫານຄຸນນະພາບດີ ຫຼື ຕ້ອງໄດ້ເສີມອາຫານເຂັ້ມຂຸ້ນຫຼາຍຂຶ້ນ ເພື່ອຊົດເຊີຍຈໍານວນອາຫານທີ່ງົວແມ່ກິນໄດ້ໜ້ອຍລົງ. ໃນໄລຍະນີ້ ຖ້າໃຫ້ອາຫານພະລັງງານບໍ່ພຽງພໍກໍຈະເຮັດໃຫ້ອັດຕາການປະສົມຕິດຕໍ່າ, ນໍ້າໜັກງົວນ້ອຍເກີດໃໝ່ ແລະ ຢ່ານົມຕໍ່າ, ອັດຕາການຕາຍຂອງງົວນ້ອຍເກີດໃໝ່ ແລະ ຢ່ານົມແມ່ນມີສູງ. ດັ່ງນັ້ນ, ໃນໄລຍະນີ້ຄວນແຍກງົວແມ່ພັນລ້ຽງຕ່າງຫາກ ແລະ ໃຫ້ອາຫານທີ່ມີຄຸນະພາບດີ, ໃຫ້ວິຕາມິນ A, D, E, K ແກ່ງົວແມ່ຖືພາໂດຍວິທີການສັກ ຫຼື ປະສົມອາຫານໃຫ້ກິນ ແລະ ມີກ້ອນແຮ່ທາດຫ້ອຍປະໄວ້ໃນຄອກໃຫ້ງົວແມ່ໄດ້ເລຍກິນຕາມໃຈ, ຈະເຮັດໃຫ້ງົວແມ່ຟື້ນໂຕຫຼັງເກີດລູກໄດ້ໄວຂຶ້ນ.

**ຕາຕະລາງ 3.** ຕົວຢ່າງການໃຫ້ອາຫານງົວແມ່ພັນພື້ນເມືອງ ໃນໄລຍະຖືພາກ່ອນເກີດລູກ ປະມານ 3 ເດືອນ (ນ້ຳໜັກ 200 ກລ)

| ລ/ດ | ລາຍການ | ລະດູຝົນ (ກລ) | ລະດູແລ້ງ (ກລ) | ລະດູແລ້ງ (ກລ) |
|---|---|---|---|---|
| 1 | ຫຍ້າສົດ | 20 | - | - |
| 2 | ຫຍ້າໝັກ | - | 20 | - |
| 3 | ເຟືອງແຫ້ງ | - | - | 5 |
| 4 | ອາຫານເຂັ້ມຂຸ້ນ | 1 | 1 | 3 |

**ຕາຕະລາງ 4.** ຕົວຢ່າງການໃຫ້ອາຫານງົວແມ່ພັນລູກປະສົມ ໃນໄລຍະຖືພາກ່ອນເກີດລູກ ປະມານ 3 ເດືອນ (ນ້ຳໜັກ 300 ກລ)

| ລ/ດ | ລາຍການ | ລະດູຝົນ (ກລ) | ລະດູແລ້ງ (ກລ) | ລະດູແລ້ງ (ກລ) |
|---|---|---|---|---|
| 1 | ຫຍ້າສົດ | 30 | - | - |
| 2 | ຫຍ້າໝັກ | - | 30 | - |
| 3 | ເຟືອງແຫ້ງ | - | - | 7 |
| 4 | ອາຫານເຂັ້ມຂຸ້ນ | 1 | 1 | 3 |

**ໝາຍເຫດ:** ອາຫານເຂັ້ມຂຸ້ນ ມີທາດຊີ້ນລວມ ປະມານ 15 – 16 ເປີເຊັນ.



ຮູບ 5. ການໃຫ້ອາຫານເຂັ້ມຂຸ້ນເປັນອາຫານເສີມ ໃນຊ່ວງລະດູແລ້ງ

## 3.2. ການເກີດລູກ

ກ່ອນເກີດລູກ 1 ອາທິດ ຄວນແຍກງົວແມ່ພັນໃຫ້ຢູ່ຄອກຕ່າງຫາກທີ່ມີຄວາມສະອາດ, ມີເຟືອງແຫ້ງ ຫຼື ຫຍ້າແຫ້ງຮອງພື້ນ ຫຼື ລ້ຽງຢູ່ໃນທົ່ງຫຍ້າທີ່ສະອາດ, ບໍ່ປຽກຊຸ່ມ ແລະ ສາມາດເບິ່ງແຍງງ່າຍ, ກະກຽມອາຫານ ແລະ ນ້ຳໃຫ້ງົວແມ່ໄດ້ກິນຢ່າງພຽງພໍ. ປົກກະຕິງົວແມ່ຈະຖືພາ ສະເລ່ຍ 282 ວັນ (274 ຫາ 291 ວັນ) ຖ້າກາຍກຳນົດເກີດລູກຮອດ 10 ວັນ ຕ້ອງສັງເກດ ແລະ ເບິ່ງແຍງຢ່າງໃກ້ຊິດ.

ໃນເວລາງົວແມ່ເກີດລູກ ຜູ້ລ້ຽງຕ້ອງເອົາໃຈໃສ່ຕິດຕາມເບິ່ງແຍງຢ່າງໃກ້ຊິດ ແລະ ຄວນປະຕິບັດຕາມຫຼັກການ ດັ່ງຕໍ່ໄປນີ້:

- ຖ້າງົວນ້ອຍອອກມາໃນທ່າປົກກະຕິ ແມ່ນບໍ່ຈຳເປັນຊ່ວຍຫຍັງ ແລະ ຄວນຢືນຢູ່ຫ່າງໄກເພື່ອບໍ່ໃຫ້ລົບກວນງົວແມ່ພັນ. ການເກີດລູກໃນທ່າປົກກະຕິແມ່ນທຳອິດພົກນ້ຳຈະແຕກກ່ອນ ແລະ ຫຼັງຈາກນັ້ນບໍ່ດົນ ສອງຕີນໜ້າ

ງຈະອອກມາ (ສັງເກດເບິ່ງພື້ນເລັບຕີນຈະຂວ້າມລົງ) ແລະ ຕາມມາແມ່ນດັງ, ປາກຈະແນບອອກມາ, ຫົວງົວນ້ອຍຈະແໜບຕາມຫວ່າງສອງຂາໜ້າ ແລະ ງົວນ້ອຍຈະເກີດອອກມາພາຍຫຼັງພົກນ້ຳແຕກ ປະມານ 1 ຫາ 2 ຊົ່ວໂມງ.

- ຖ້າງົວນ້ອຍຢູ່ໃນທ່າອື່ນຖືວ່າເປັນທ່າທີ່ຜິດປົກກະຕິ ຫຼື ຫຼັງຈາກພົກນ້ຳແຕກແລ້ວ ຖ້າງົວນ້ອຍຍັງບໍ່ເກີດອອກມາ ຫຼື ເກີດອອກມາຊ້າເກີນ 2 ຊົ່ວໂມງ ຄວນໄດ້ມີການຊ່ວຍເຫຼືອ. ຖ້າບໍ່ດັ່ງນັ້ນ ພາຍໃນ 4 ຊົ່ວໂມງ ລູກງົວຈະຕາຍ.
- ໃນກໍລະນີ ງົວນ້ອຍອອກມາໃນທ່າປົກກະຕິ ແຕ່ງົວແມ່ບໍ່ມີແຮງເບັ່ງ ຕ້ອງພະຍາຍາມໃຫ້ງົວແມ່ໄດ້ຍ່າງໄປມາ ແລະ ຄວນສັກຢາອັອກຊີຕັອກຊິນ (Oxytocin injection) ເພື່ອຊ່ວຍກະຕຸ້ນໃຫ້ງົວແມ່ມີແຮງເບັ່ງ, ກະຕຸ້ນການໄຫຼຂອງນ້ຳນົມແມ່ຫຼັງເກີດລູກ ແລະ ຍັງຈະຊ່ວຍເຮັດໃຫ້ມົດລູກເຂົ້າອູ່ໄດ້ໄວຂຶ້ນ.
- ເມື່ອງົວນ້ອຍເກີດອອກມາແລ້ວ ຕ້ອງໃຫ້ຄວາມຊ່ວຍເຫຼືອທັນທີ ໂດຍການເຊັດໂຕໃຫ້ແຫ້ງ, ເອົານ້ຳເມືອກອອກຈາກປາກ, ດັງ ໃຫ້ໝົດ, ຈັບສອງຂາຫຼັງຂອງງົວນ້ອຍຍົກຂຶ້ນໃຫ້ຫົວຊຸ້ນລົງ ແລະ ເຮັດແບບນັ້ນຈົນໄດ້ຍິນສຽງງົວນ້ອຍຮ້ອງ. ຖ້າງົວນ້ອຍຫາຍໃຈບໍ່ສະດວກອາດຈະຕ້ອງຊ່ວຍຫາຍໃຈໂດຍການເປົ່າປາກ. ຫຼັງຈາກນັ້ນ, ມັດສາຍບືຫ່າງຈາກພື້ນທ້ອງ 4 ຫາ 6 ຊັງຕີແມັດ ຕັດສາຍບື ແລະ ທາດ້ວຍຢາທິງເຈີໄອໂອດີນ.
- ເມື່ອງົວນ້ອຍຢືນໄດ້ແລ້ວ ພະຍາຍາມໃຫ້ກິນນ້ຳນົມເຫຼືອງຈາກແມ່ໄວເທົ່າໃດຍິ່ງດີ ຫຼື ປະມານ 4 ຫາ 8 ຊົ່ວໂມງ ແລະ ບໍ່ຄວນເກີນ 24 ຊົ່ວໂມງ ຫຼັງຈາກເກີດ ເພາະນ້ຳນົມເຫຼືອງຈະມີຄຸນຄ່າທາງດ້ານອາຫານສູງ ແລະ ທີ່ສຳຄັນແມ່ນມີພູມຄຸ້ມກັນພະຍາດຕ່າງໆສາມາດຖ່າຍທອດຈາກແມ່ໃຫ້ລູກໄດ້. ຖ້າຫາກງົວນ້ອຍບໍ່ສາມາດດູດນົມກິນເອງໄດ້ຜູ້ລ້ຽງກໍຕ້ອງໄດ້ຊ່ວຍ ໂດຍການຈັບງົວນ້ອຍໃຫ້ຮຽນດູດນົມແມ່ ຫຼື ຮີດເອົານ້ຳນົມແມ່ມາໃສ່ເຕົ້າ (ຄວນໃຫ້ໄດ້ ປະມານ 2 ລິດ) ປ້ອນໃຫ້ງົວນ້ອຍກິນ.
- ຖ້າຫາກງົວນ້ອຍບໍ່ໄດ້ກິນນ້ຳນົມເຫຼືອງ ພາຍໃນກຳນົດພາຍໃນເວລາ 24 ຊົ່ວໂມງ ພູມຄຸ້ມກັນພະຍາດທີ່ຖ່າຍທອດຈາກແມ່ຫາລູກ ຈະບໍ່ສາມາດດູດຊຶມຜ່ານທາງເດີນອາຫານໄດ້ ຈະເຮັດໃຫ້ງົວນ້ອຍອ່ອນແອ, ເຈັບປ່ວຍໄດ້ງ່າຍ ແລະ ສຸດທ້າຍແລ້ວເຖິງແມ່ນວ່າຜູ້ລ້ຽງຈະເອົາໃຈໃສ່ເບິ່ງແຍງດີປານໃດກໍຕາມ ງົວນ້ອຍກໍຈະຕາຍໃນທີ່ສຸດ.
- ຫຼັງຈາກລູກເກີດອອກມາແລ້ວ ປະມານ 8 ຫາ 12 ຊົ່ວໂມງ ແຮ່ (ນ້ອງງົວ) ຈະອອກມາ, ຖ້າບໍ່ເຫັນອອກມາສະແດງວ່າແຮ່ຕິດຕ້ອງໄດ້ລ້າງ ແລະ ສັກຢາຕ້ານເຊື້ອເພື່ອປ້ອງກັນການຕິດເຊື້ອທາງລະບົບສືບພັນ.



ຮູບ 6. ການເກີດລູກຂອງງົວແມ່ພັນ

**ແຫຼ່ງທີ່ມາ:** https://www.penthaifarm.com/cow/

# 4. ການລ້ຽງງົວນ້ອຍເກີດໃໝ່ ຫາ ຢ່ານົມ

ງົວແມ່ ແລະ ງົວນ້ອຍເກີດໃໝ່ ບໍ່ຄວນປ່ອຍໃຫ້ໄປນຳຝູງ ຄວນແຍກລ້ຽງຕ່າງຫາກ ແລະ ຈັດຫາອາຫານທີ່ມີຄຸນະພາບດີ ແລະ ມີນ້ຳສະອາດໃຫ້ກິນຢ່າງພຽງພໍ, ເຊິ່ງການເບິ່ງແຍງງົວນ້ອຍ ຄວນປະຕິບັດ ດັ່ງລຸ່ມນີ້:

- ໃນຟູງປັບປຸງພັນ ຄວນຊັ່ງນ້ຳໜັກງົວນ້ອຍເກີດໃໝ່ ພາຍໃນ 24 ຊົ່ວໂມງ.
- ຖ້າມີງົວໃນຝູງຈຳນວນຫຼາຍໂຕ ຄວນຕິດເບີຫູ ຫຼື ໃສ່ເຄື່ອງໝາຍ ເພື່ອສະດວກໃນການຕິດຕາມ ແລະ ຈົດປະຫວັດພັນສັດ.
- ເມື່ອງົວນ້ອຍອາຍຸ 3 ອາທິດ ຄວນຂ້າແມ່ທ້ອງໂຕກົມ ແລະ ຂ້າຊ້ຳອີກ ເມື່ອອາຍຸ 6 ອາທິດ.
- ເມື່ອງົວນ້ອຍ ອາຍຸ 3 ຫາ 8 ເດືອນ ສັກວັກຊີນກັນພະຍາດແທ້ງຕິດຕໍ່ໃຫ້ແກ່ງົວນ້ອຍໂຕແມ່ທຸກໆໂຕ.
- ເມື່ອງົວນ້ອຍ ອາຍຸ 4 ເດືອນ ໃຫ້ສັກວັກຊີນກັນພະຍາດປາກເປື່ອຍລີ້ງເລັບ ແລະ ອາຍຸ 6 ເດືອນ ໃຫ້ສັກວັກຊີນກັນພະຍາດເຕົ້ານົມເລືອດງົວ-ຄວາຍ.

## 4.1 ການໃຫ້ອາຫານເຂັ້ມຂຸ້ນເສີມແກ່ງົວນ້ອຍ

ໂດຍທົ່ວໄປ ງົວນ້ອຍຈະເລີ່ມຮຽນກິນຫຍ້າ ແລະ ອາຫານ ເມື່ອອາຍຸ ປະມານ 2 ຫາ 3 ເດືອນ ເນື່ອງຈາກວ່າ ງົວແມ່ພັນຈະຜະລິດນ້ຳນົມລ້ຽງລູກໄດ້ສູງສຸດໃນໄລຍະນີ້ ຫຼັງຈາກນັ້ນ ຈະຫຼຸດລົງເລື້ອຍໆ. ໃນຂະນະທີ່ ງົວນ້ອຍມີການເຕີບໃຫຍ່ຂຶ້ນທຸກມື້ ງົວນ້ອຍຈຶ່ງຈຳເປັນຕ້ອງກິນອາຫານອື່ນທົດແທນ. ແນວໃດກໍຕາມ, ຖ້າງົວນ້ອຍກິນຫຍ້າ ແລະ ອາຫານໄດ້ໄວ ກໍຈະເຮັດໃຫ້ໃຫຍ່ໄວ, ສະນັ້ນ, ເມື່ອງົວນ້ອຍແຂງແຮງດີແລ້ວ ຄວນຝຶກໃຫ້ງົວນ້ອຍກິນອາຫານເຂັ້ມຂຸ້ນ ໂດຍການໃຫ້ກິນອາຫານສຳເລັດຮູບຂອງໝູນ້ອຍດູດນົມ ທີ່ມີຊີ້ນລວມຫຼາຍກວ່າ 20%, ເຊິ່ງການຝຶກໃຫ້ງົວນ້ອຍກິນອາຫານໄວກວ່າປົກກະຕິນັ້ນ ແມ່ນຈະຊ່ວຍເຮັດໃຫ້ກະເພາະໝັກຂອງງົວນ້ອຍມີການພັດທະນາໄດ້ໄວຂຶ້ນ, ງົວນ້ອຍຈະມີການເຕີບໃຫຍ່ໄວຂຶ້ນ ແລະ ມີນ້ຳໜັກຢ່ານົມສູງກວ່າງົວນ້ອຍທີ່ບໍ່ໃຫ້ອາຫານເຂັ້ມຂຸ້ນເປັນອາຫານເສີມ.



ຮູບ 7. ການໃຫ້ອາຫານງົວນ້ອຍ

**ແຫຼ່ງທີ່ມາ:** https://ourworld.unu.edu/en/uk-chief-scientist-calls-for-urgent-debate-on-climate-change-mitigation

ງົວນ້ອຍອາຍຸຕໍ່າກວ່າ 3 ເດືອນ ໃຫ້ກິນອາຫານໄດ້ເຕັມທີ່ ແຕ່ຖ້າອາຍຸ 3 ເດືອນ ຂຶ້ນໄປ ຄວນເພີ່ມອາຫານໃຫ້ເທື່ອລະໜ້ອຍ ແລະ ຄ່ອຍໆເພີ່ມຂຶ້ນຫຼັງຈາກງົວນ້ອຍທຸກໂຕເລີ່ມກິນອາຫານ. ຖ້າງົວນ້ອຍຢູ່ໃນຝາມມີຂະໜາດຕ່າງກັນ ອາດມີຄວາມຈຳເປັນຕ້ອງໄດ້ແຍກງົວນ້ອຍລ້ຽງເປັນກຸ່ມ. ຄວນເຮັດຄອກໃຫ້ອາຫານງົວນ້ອຍຢູ່ຕິດກັບຄອກຂອງງົວແມ່ ເພື່ອໃຫ້ງົວນ້ອຍສາມາດເຂົ້າໄປຮຽນກິນອາຫານໄດ້ສະດວກ ໂດຍເຮັດເປັນຮາວກັ້ນ ແລະ ມີປ່ອງກວ້າງປະມານ 40 ຫາ 50 ຊັງຕີແມັດ, ຮາງອາຫານສຳລັບງົວນ້ອຍ ປະມານ 30 ຊັງຕີແມັດ ຕໍ່ງົວນ້ອຍ 3 ໂຕ. ພື້ນຄອກຕ້ອງສະອາດ ແລະ ມີຄວາມອົບອຸ່ນດີ, ເຊິ່ງອາດຈະໃສ່ເຟືອງຮອງພື້ນ ຫຼື ອາດຈະໃຕ້ດອກໄຟໃຫ້ຄວາມອຸ່ນແກ່ງົວນ້ອຍ ຖ້າຫາກອາກາດໜາວເຢັນຫຼາຍ.

## 4.2 ການຕອນງົວ

ງົວນ້ອຍໂຕຜູ້ທີ່ບໍ່ຕ້ອງການນຳໃຊ້ ຫຼື ຂາຍເປັນພໍ່ພັນ ຄວນຕອນເມື່ອມີອາຍຸ ປະມານ 5 ຫາ 6 ເດືອນ ຈະເຮັດໃຫ້ການຈະເລີນເຕີບໂຕຂອງງົວເປັນປົກກະຕິ, ລະບົບອະໄວຍະວະສືບພັນທັງໝົດຂອງງົວຜູ້ຈະບໍ່ມີການຂະຫຍາຍຕົວໄດ້ອີກເລີຍ, ງົວຈະມີນິໄສຊູ່, ເປັນງົວຄຸ້ນດີ, ຊີ້ນງົວຜູ້ທີ່ຕອນຈະມີລົດຊາດແຊບດີ, ຊີ້ນອ່ອນນຸ່ມ, ມີໄຂມັນແຊກຫຼາຍກວ່າ ແລະ ຊີ້ນຈະບໍ່ມີກິ່ນຂອງຮໍໂມນເພດຜູ້. ເຖິງຢ່າງໃດກໍຕາມ, ງົວຜູ້ທີ່ບໍ່ຕອນຈະມີອັດຕາການຈະເລີນເຕີບໂຕສູງກວ່າງົວຜູ້ທີ່ຕອນ ປະມານ 5 ຫາ 10 ເປີເຊັນ ແລະ ມີປະສິດທິພາບການນຳໃຊ້ອາຫານສູງກວ່າ 3 ຫາ 5 ເປີເຊັນ.

ການຕອນສາມາດເຮັດໄດ້ຫຼາຍວິທີ ເຊັ່ນ: ການທຸບໃຫ້ແກ່ນອັນທະແຕກ, ການປາດເອົາແກ່ນອັນທະອອກ ແຕ່ວິທີທີ່ມີຄວາມປອດໄພແມ່ນ ການຕອນດ້ວຍວິທີການໃຊ້ຄີມໜີບ (Burdizzo) ເຊິ່ງເປັນວິທີທີ່ງ່າຍ ແລະ ນຳໃຊ້ຫຼາຍໃນປະຈຸບັນ ໂດຍຈະໃຊ້ຄີມໜີບທໍ່ສົ່ງນ້ຳເຊື້ອໃຫ້ຕັນ ເຊິ່ງຈະໜີບຢູ່ເທິງແກ່ນອັດທະ ປະມານ 4 ຫາ 5 ຊັງຕີແມັດ ແລະ ໜີບປະໄວ້ ປະມານ 10 ນາທີ ຈຶ່ງເອົາອອກ. ຫຼັງຈາກນັ້ນ, ຈຶ່ງເລີ່ມໜີບອີກຂ້າງໜຶ່ງ ແຕ່ໃຫ້ໜີບສູງຈາກຈຸດເກົ່າ 3 ຫາ 5 ຊັງຕີແມັດ ເພື່ອຮັກສາໃຫ້ຖົງຫຸ້ມແກ່ນອັນທະມີຊ່ອງຫວ່າງຂອງເສັ້ນເລືອດມາຫຼໍ່ລ້ຽງຖົງຫຸ້ມ ເຊິ່ງເປັນການປ້ອງກັນການອັກເສບທີ່ຈະເກີດຂຶ້ນ.




ຮູບ 8. ການຕອນທຳງົວ ດ້ວຍຄີມໜີບ

**ແຫຼ່ງທີ່ມາ:** https://cmapspublic3.ihmc.us/rid=1N8PNJDG5-1PFNBTN-16W9G/castration%20cattle.jpg

### 4.3 ການຢ່ານົມ

ຊາວກະສິກອນສ່ວນຫຼາຍມັກປະໃຫ້ງົວນ້ອຍຢູ່ນຳແມ່ຕະຫຼອດຈົນແມ່ເກີດລູກໂຕໃໝ່ ຫຼື ປະໃຫ້ງົວນ້ອຍຢ່ານົມເອງ, ເຊິ່ງມີຜົນເສຍເຮັດໃຫ້ແມ່ທີ່ກຳລັງຖືພາໃກ້ຈະເກີດມີສຸຂະພາບບໍ່ສົມບູນ ເພາະຕ້ອງໄດ້ກິນອາຫານເພື່ອລ້ຽງລູກຢູ່ໃນທ້ອງ ແລະ ລູກໂຕເກົ່າອີກ. ສະນັ້ນ, ການຢ່ານົມງົວນ້ອຍໄວເທົ່າໃດກໍຈະເຮັດໃຫ້ງົວແມ່ມີໂອກາດຟື້ນຟູສຸຂະພາບໄດ້ໄວຂຶ້ນ, ງົວນ້ອຍທີ່ມີການຈະເລີນເຕີບໂຕໄວແມ່ນສາມາດຢ່ານົມໄດ້ຕັ້ງແຕ່ອາຍຸ ປະມານ 5 ເດືອນ. ແຕ່ຖ້າງົວນ້ອຍຍັງບໍ່ແຂງແຮງກໍຕ້ອງໄດ້ແກ່ຍາວເວລາອອກໄປຕື່ມອີກ ປະມານ 6 ຫາ 8 ເດືອນ. ແນວໃດກໍຕາມ, ການຢ່ານົມງົວນ້ອຍຄວນຄຳນຶງເຖິງສຸຂະພາບຂອງງົວນ້ອຍ ແລະ ງົວແມ່ຕື່ມອີກ. ຖ້າຫາກງົວແມ່ມີສຸຂະພາບບໍ່ແຂງແຮງ, ຈ່ອຍຜອມ ແລະ ບໍ່ສາມາດລ້ຽງລູກຕໍ່ໄປໄດ້ກໍຄວນຢ່ານົມລູກກ່ອນກຳນົດ ແລະ ຕ້ອງໄດ້ເອົາໃຈໃສ່ລ້ຽງງົວນ້ອຍເປັນພິເສດ ໂດຍການໃຫ້ອາຫານທີ່ມີຄຸນນະພາບດີ ແລະ ຕິດຕາມເບິ່ງແຍງຢ່າງໃກ້ຊິດ.

ການຢ່ານົມງົວນ້ອຍໃນໄລຍະທຳອິດ ຄວນຂັງງົວແມ່ ແລະ ລູກ ໄວ້ໃນຄອກທີ່ຢູ່ໃກ້ກັນ ເປັນເວລາ 3 ຫາ 5 ວັນ ເພື່ອປ້ອງກັນບໍ່ໃຫ້ງົວແມ່ບຸຮື້ອມາຫາງົວນ້ອຍ. ຫຼັງຈາກນັ້ນ, ຈຶ່ງຍ້າຍງົວແມ່ໄປຢູ່ໃນທົ່ງຫຍ້າ ຫຼື ຄອກທີ່ຢູ່ຫ່າງໄກກັນອອກໄປ ແລະ ຄວນຂັງງົວນ້ອຍໄວ້ໃນຄອກ ປະມານ 7 ຫາ 10 ວັນ ໂດຍໃຫ້ກິນຫຍ້າ ແລະ ອາຫານເຂັ້ມຂຸ້ນ ຢ່າງເຕັມທີ່, ເຊິ່ງໄລຍະນີ້ ເປັນການຝຶກໃຫ້ງົວນ້ອຍມີຄວາມຄຸ້ນເຄີຍກັບການໃຫ້ອາຫານ, ແຮ່ທາດ, ການເຂົ້າຄອກແຄບ, ການສີດຜົ່ນຂ້າແມ່ກາຝາກຕ່າງໆ. ສິ່ງທີ່ສຳຄັນ ຄວນລ້ຽງງົວນ້ອຍຢ່ານົມໃໝ່ຢູ່ໃນທົ່ງຫຍ້າ ຫຼື ຄອກ ທີ່ມີຮົ້ວ ຫຼື ຮາວກັ້ນ ທີ່ມີຄວາມແຂງແຮງທົນທານ ເພື່ອປ້ອງກັນບໍ່ໃຫ້ງົວນ້ອຍໜີໄປຫາແມ່ໄດ້ ຖ້າຫາກງົວນ້ອຍສາມາດໜີອອກໄປໄດ້ຕະຫຼອດ ຈະເຮັດໃຫ້ກາຍເປັນນິໄສ ຫຼື ເປັນງົວທີ່ຮ້າຍຮື້.

## 5. ການຝຶກງົວໃຫ້ມີນິໄສຄຸ້ນເຄີຍກັບຄົນ

ນອກຈາກ ການຈັດການໃນດ້ານຕ່າງໆທີ່ກ່າວມາຂ້າງເທິງນັ້ນແລ້ວ ຜູ້ລ້ຽງຄວນໄດ້ຝຶກໃຫ້ງົວ ມີນິໄສຄຸ້ນຄົນ ເພື່ອສະດວກຕໍ່ການຈັດການຕ່າງໆ ເຊັ່ນ: ການຈູງ ຫຼື ບັງຄັບງົວເຂົ້າຄອກແຄບ ຫຼື ຫຼັກໜີບ ເພື່ອສັກຢາກັນພະຍາດ, ຂ້າແມ່ກາຝາກ ຫຼື ປິ່ນປົວ ລວມເຖິງການຮີດເອົານ້ຳນົມເຫຼືອງຈາກງົວແມ່ພັນໃຫ້ງົວນ້ອຍເກີດໃໝ່ກິນ ໃນກໍລະນີທີ່ງົວນ້ອຍບໍ່ສາມາດດູດນົມເອງໄດ້ ເນື່ອງຈາກງົວນ້ອຍບໍ່ແຂງແຮງ, ແມ່ບໍ່ລູກກິນນົມ ຫຼື ຫົວນົມແມ່ໃຫຍ່ເກີນໄປ.

ການຝຶກງົວໃຫ້ມີນິໄສຄຸ້ນຄົນ ແລະ ຈູງງ່າຍ ຜູ້ລ້ຽງຄວນຝຶກຕັ້ງແຕ່ໄລຍະງົວນ້ອຍຢ່ານົມໃໝ່ ຫຼື ຖ້າຫາກເປັນງົວແມ່ພັນທີ່ຊື້ເຂົ້າມາໃໝ່ ກໍສາມາດຝຶກໄດ້ເຊັ່ນດຽວກັນ, ເຊິ່ງສາມາດປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

- ໃນເວລາໃຫ້ອາຫານງົວແຕ່ລະຄັ້ງ ຜູ້ລ້ຽງຄວນພະຍາຍາມໃຊ້ມືລູບຕາມດັງ, ຫົວ ແລະ ລຳໂຕຂອງງົວແມ່ ໂດຍໃຊ້ເກືອ ຫຼື ອາຫານເສີມ ວາງໄວ້ໃນມືໃຫ້ງົວແມ່ເຂົ້າມາເລຍກິນ ຈະເຮັດໃຫ້ງົວແມ່ບໍ່ຮູ້ສຶກຢ້ານກົວ;
- ໃນຕອນກາງເວັນຖ້າຫາກອາກາດຮ້ອນອົບເອົ້າຈົນເກີນໄປຄວນມີການອາບນ້ຳໃຫ້ງົວ (ຖ້າຈຳເປັນ) ຫຼື ເວລາງົວເຂົ້າມາຄອກໃນຕອນແລງ ຄວນມີການດັງໄຟໄລ່ແມງໄມ້ ແລະ ໃຊ້ເວລາຢູ່ນຳງົວ ຢ່າງໜ້ອຍ 15 ນາທີ ເພື່ອເປັນການຝຶກໃຫ້ງົວໄດ້ຢູ່ໃກ້ຊິດ ຫຼື ມີຄວາມຄຸ້ນເຄີຍກັບຜູ້ລ້ຽງຫຼາຍຂຶ້ນ ແລະ ຍັງສາມາດສັງເກດອາການຜິດປົກກະຕິຂອງງົວແຕ່ລະໂຕນຳຕື່ມອີກ;
- ງົວທຸກໆໂຕຄວນໄດ້ຮັບການຊົນເຕົາ ເພື່ອສະດວກໃນການຄວບຄຸມ;
- ໃນໄລຍະທຳອິດ ຄວນໃຊ້ເຊືອກມັດເຕົາງົວໄວ້ໃນຄອກ ຢ່າງໜ້ອຍ 2 ຄັ້ງ/ອາທິດ;
- ເມື່ອສັງເກດເຫັນວ່າ ງົວລຶ້ງເຄີຍກັບການມັດເຊືອກແລ້ວ ໃຫ້ຝຶກຈູງຍ່າງໄປມາຢູ່ໃນຄອກ ຢ່າງໜ້ອຍ 2 ຄັ້ງ/ອາທິດ;

- ຫຼັງຈາກນັ້ນ ໃຫ້ຝຶກຈູງເຂົ້າຄອກແຄບ ຫຼື ຫຼັກໜີບ ຢ່າງໜ້ອຍ 2 ຄັ້ງ/ອາທິດ, ເຊິ່ງໃນເວລາທີ່ເອົາງົວເຂົ້າຄອກແຄບ ຫຼື ຫຼັກໜີບສຳເລັດແລ້ວ ໃຫ້ໃຊ້ມືລູບຄຳຕາມລຳໂຕຂອງງົວ ເພື່ອໃຫ້ງົວມີຄວາມຄຸ້ນເຄີຍ ແລະ ບໍ່ເກີດຄວາມຢ້ານກົວ.





ຮູບ 9. ການຝຶກໃຫ້ງົວມີນິໄສຄຸ້ນຄົນ

# ເອກະສານອ້າງອີງ

ບຸນຖອງ ບົວທອມ, ພອນປະເສີດ ເພັງສະຫວັນ, ບຸນລ້ຽງ ຄຸດສະຫວ່າງ, ສົມຈັນ ຄຳພາວົງ, ອຳມະລີ ເພັງວິໄລສຸກ ແລະ ບຸນຖາວອນ ກຸນນະວົງສາ. 2014. ຢາກລ້ຽງງົວໃຫ້ໄດ້ດີຄວນຮູ້ຫຍັງແດ່?, ສູນຄົ້ນຄວ້າການລ້ຽງສັດ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້.

ບຸນລ້ຽງ ຄຸດສະຫວ່າງ, ສົມຈັນ ຄຳພາວົງ, ບຸນຖາວອນ ກຸນນະວົງສາ ແລະ ສຸກັນ ແກ້ວໝູຈັນ. 2007. ຄູ່ມືການປະສົມພັນທຽມງົວ, ສູນຄົ້ນຄວ້າການລ້ຽງສັດ, ສະຖາບັນຄົ້ນຄວ້າວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້.

ຍອດຊາຍ ທອງໄທນັນ. 2004. ການລ້ຽງງົວຊີ້ນ, ກຸ່ມວິໄຈ ແລະ ພັດທະນາງົວຊີ້ນ, ກອງບຳລຸງສັດ, ກົມລ້ຽງສັດ, ກະຊວງກະເສດ ແລະ ສະຫະກອນ (ພາສາໄທ).

ຍອດຊາຍ ທອງໄທນັນ, ໄພໂຣດ ສິຣິສົມ ແລະ ສະຫວ່າງ ອັງກຸໂຣ. 2005. ການລ້ຽງງົວຊີ້ນ, ກົມລ້ຽງສັດ, ກະຊວງກະເສດ ແລະ ສະຫະກອນ (ພາສາໄທ).

ປິຍະສັກ ສຸວັນນີ ແລະ ສົມມາດ ສຸວັນມາໂຈ. 2005. ຄູ່ມືການລ້ຽງງົວພື້ນເມືອງ ສຳລັບຊາວກະສິກອນຂະໜາດນ້ອຍ, ກຸ່ມວິໄຈ ແລະ ພັດທະນາງົວຊີ້ນ, ກອງບຳລຸງສັດ, ກົມລ້ຽງສັດ, ກະຊວງກະເສດ ແລະ ສະຫະກອນ (ພາສາໄທ).

ວັນທອງ ແພງວິຈິດ, ພອນປະເສີດ ເພັງສະຫວັນ ແລະ ວຽງສະຫວັນ ພົມພະຈັນວົງສິດ. 2019. ການນຳສະເໜີເຕັກນິກໃໝ່ສຳລັບການລ້ຽງງົວພື້ນເມືອງລາວ, ສະຖາບັນພັດທະນາຊົນນະບົດ ສ.ເກົາຫຼີ, ອົງການຮ່ວມມືສາກົນ ສ.ເກົາຫຼີ.

https://www.shutterstock.com/image-photo/mineral-530844337

https://www.penthaifarm.com/cow/

https://ourworld.unu.edu/en/uk-chief-scientist-calls-for-urgent-debate-on-climate-change-mitigation

https://cmapspublic3.ihmc.us/rid=1N8PNJDG5-1PFNBTN-16W9G/castration%20cattle.jpg

**ສອບຖາມຂໍ້ມູນເພີ່ມຕື່ມ:**

ທ່ານ ພູຄຳ ວຽງວິໄລ, ຮອງຫົວໜ້າສູນຄົ້ນຄວ້າການລ້ຽງສັດ, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ.
ບ້ານສີວິໄລ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.
Tel & WhatsApp: (856 20) 56 228 202.
E-mail: phoukhamvvl@gmail.com

ທ່ານ ຄຳເພັດ ພິລາວົງ, ຟາມຄອບຄົວລ້ຽງງົວ ບຸດພິລາ, ບ້ານແສນດິນ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.
Tel & WhatsApp: (856 20) 99 938 559.

ທ່ານ ນາງ ແສດມະນີ ພົມພັກດີ, ຮອງຫົວໜ້າສູນຂໍ້ມູນຂ່າວສານ ກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ.
Tel & WhatsApp: (856 20) 22 866 226
E-mail: sadmany99@gmail.com